ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR
ຂ່າວ NEWS
ໜ່ວຍງານຂ່າວສານ ພະແນກສັງລວມ ຫ້ອງການ ທຫລ
ໂທ /ແຟັກ ( 856-21) 260283



# ອົງຄະນະພັກ ທຫລ ດຳເນີນກອງປະຊຸມກວດກາ






ອົງຄະນະພັກ ທະນາຄານແຫ່ງ ສປປ ລາວ (ທຫລ) ໄດ້ຈັດຕັ້ງການດຳເນີນກອງປະຊຸມວຽກງານກວດກາ ທຫລ ປະຈຳປີ 2018 ໃນລະຫວ່າງ ວັນທີ 8-9 ເມສາ 2019 ທີ່ສະຖາບັນການທະນາຄານ ພາຍໃຕ້ການເປັນປະທານຂອງສະຫາຍ ສອນໄຊ ສິດພະໄຊ ກຳມະການສຳຮອງສູນກາງພັກ, ເລຂາຄະນະພັກ, ຜູ້ວ່າການ ທຫລ; ພ້ອມນີ້, ຍັງມີການເຂົ້າຮ່ວມຂອງສະຫາຍ ປອ. ດາວບົວລະພາ ບາວົງເພັດ ຮອງປະທານຄະນະກວດກາສູນກາງພັກ ແລະ ອົງການກວດກາລັດຖະບານ; ມີບັນດາສະຫາຍຄະນະປະຈຳພັກ, ຄະນະພັກ, ເລຂາໜ່ວຍພັກ, ຜູ້ກວດກາໜ່ວຍພັກ, ເລຂາຄະນະພັກຮາກຖານ, ປະທານກວດກາຄະນະພັກຮາກຖານ, ບັນດາສາຂາ ທຫລ ປະຈຳແຕ່ລະພາກ ແລະ ສາຂາທະນາຄານທຸລະກິດລັດໃນທົ່ວປະເທດ.

ໃນກອງປະຊຸມ; ສະຫາຍ ໝັ່ນແກ້ວ ມຸນີວົງ ຄະນະພັກ, ຮອງປະທານຄະນະກວດກາພັກ ທຫລ ໄດ້ຜ່ານຮ່າງບົດສະຫຼຸບການເຄື່ອນໄຫວວຽກງານກວດກາ ທຫລ ປະຈຳປີ 2018 ໂດຍໄດ້ສະຫຼຸບຕີລາຄາການເຄື່ອນໄຫວວຽກງານກວດກາພັກ-ລັດຢ່າງຮອບດ້ານ ຊຶ່ງມີທັງດ້ານດີທີ່ຄວນເສີມຂະຫຍາຍກ່ຽວກັບການຊີ້ນຳ-ນຳພາຂອງຄະນະກວດກາພັກ ທຫລ ແລະ ຄະນະກວດກາແຕ່ລະຂັ້ນຕໍ່ກັບວຽກງານການຕິດຕາມກວດກາ; ພ້ອມນັ້ນ, ຍັງຍົກໃຫ້ເຫັນດ້ານອ່ອນ-ຂໍ້ຄົງຄ້າງ ທີ່ຮີບຮ້ອນເອົາໃຈໃສ່ປັບປຸງແກ້ໄຂໃຫ້ມີການຫັນປ່ຽນທີ່ຕັ້ງໜ້າເປັນຕົ້ນການຕິດຕາມກວດກາກ່ຽວກັບການຈັດຕັ້ງປະຕິບັດພາລະບົດບາດ, ສິດ ແລະ ໜ້າທີ່, ບັນດາມະຕິ, ຄຳສັ່ງ, ຂໍ້ກຳນົດ, ກົດລະບຽບຂອງພັກ, ກົດໝາຍຂອງລັດ ແລະ ຄວາມເປັນແບບຢ່າງນຳໜ້າຂອງບຸກຄົນສະມາຊິກພັກທີ່ຂຶ້ນກັບອົງຄະນະພັກ ທຫລ ເພື່ອເປັນການສະກັດກັ້ນ ແລະ ຕ້ານຍປະກົດການຫຍໍ້ທໍ້ທີ່ອາດຈະເກີດຂຶ້ນ; ສະເພາະໃນປີ 2018 ມີປະກົດການຫຍໍ້ທໍ້ເກີດຂຶ້ນໃນຂະແໜງການທະນາຄານ ແລະ ໄດ້ສ້າງຄວາມເສຍຫາຍເປັນຈຳນວນຫຼາຍສົມຄວນ ໂດຍການສວຍໃຊ້ໜ້າທີ່ຫາຜົນປະໂຫຍດສ່ວນຕົວ ໂດຍການລັກຖອນເງິນໃນບັນຊີຂອງລູກຄ້າ, ຮັບເງິນຈາກລູກຄ້າມາແລ້ວບໍ່ມອບເຂົ້າບັນຊີ, ລັກເງິນໃນຄັງໄປໃຊ້ຈ່າຍສ່ວນຕົວ, ຮຽກຮ້ອງຜົນປະໂຫຍດ ຈາກລູກຄ້າ ແລະ ການປອມແປງເອກະສານ ເພື່ອໂອນເງິນທາງບັນຊີ.







ຕໍ່ກັບບັນຫາດັ່ງກ່າວ; ຄະນະພັກ-ຄະນະນຳ ແຕ່ລະຂັ້ນ ໄດ້ເອົາໃຈໃສ່ຢ່າງຕັ້ງໜ້າໃນການແກ້ໄຂປະກົດການຫຍໍ້ທໍ້ທີ່ເກີດຂຶ້ນໂດຍໄດ້ມີມາດຕະການ, ວິທີການແກ້ໄຂທີ່ເໝາະສົມ ແລະ ທັນສະພາບການ; ປັດຈຸບັນ ອີງຄະນະພັກ ທຫລ ພວມສຸມໃສ່ຈັດຕັ້ງປະຕິບັດການດຳເນີນຕີລາຄາການກໍ່ສ້າງໜ່ວຍພັກ ປອດໃສ, ເຂັ້ມແຂງ, ໜັກແໜ້ນ ປະຈຳປີ 2018 ເພື່ອເປັນການຢັ້ງຢືນເຖິງການຊີ້ນຳ-ນຳພາຈັດຕັ້ງປະຕິບັດໜ້າທີ່ວຽກງານຂອງບັນດາຮາກຖານພັກ-ສະມາຊິກພັກ ທີ່ຢູ່ພາຍໃຕ້ຄວາມຮັບຜິດຊອບຂອງຕົນ.






ກອງປະຊຸມ ຍັງໄດ້ຮັບຟັງການເຜີຍແຜ່ເອກະສານສຳຄັນຈຳນວນໜຶ່ງ ໂດຍສະເພາະແມ່ນບົດສະຫຼຸບຕີລາຄາການເຄື່ອນໄຫວວຽກງານກວດກາທົ່ວປະເທດ ປະຈຳປີ 2018 ແລະ ທິດທາງແຜນການ ປີ 2019 ຂອງຄະນະກວດກາສູນກາງພັກ; ບົດໂອ້ລົມຂອງ ສະຫາຍ ບຸນທອງ ຈິດມະນີ ກຳມະການກົມການເມືອງສູນກາງພັກ, ເລຂາທິການສູນກາງພັກ, ຮອງນາຍົກລັດຖະມົນຕີ ຕໍ່ກອງປະຊຸມວຽກງານກວດກາ ທົ່ວປະເທດປະຈຳປີ 2018; ບົດແນະນຳກ່ຽວກັບການດຳເນີນຊີວິດການເມືອງພາຍໃນພັກ ເພື່ອກ້າວເຂົ້າສູ່ກອງປະຊຸມໃຫຍ່ 3 ຂັ້ນ ແລະ ຄຳແນະນຳກ່ຽວກັບການຈັດຕັ້ງປະຕິບັດກົດໝາຍ ວ່າດ້ວຍການກວດກາລັດ (ສະບັບປັບປຸງ); ພ້ອມນີ້, ຍັງໄດ້ມີການມອບບັດໃຫ້ແກ່ສະມາຊິກພັກ ຄັ້ງທີ VII ຈຳນວນໜຶ່ງ; ຮັບຟັງການປະກອບຄຳເຫັນໃນດ້ານຕ່າງໆຈາກບັນດາຮາກຖານພັກ ແລະ ຜູ້ແທນເຂົ້າຮ່ວມກອງປະຊຸມ ທີ່ຕິດພັນກັບວຽກງານກວດກາ ແລະ ການຈັດຕັ້ງປະຕິບັດວຽກງານວິຊາສະເພາະຂອງຕົນ ເຮັດໃຫ້ການເຄື່ອນໄຫວວຽກງານຕົວຈິງຢູ່ແຕ່ລະຂັ້ນ, ແຕ່ລະພາກສ່ວນ ໄດ້ຮັບການຈັດຕັ້ງປະຕິບັດຢ່າງມີປະສິດທິພາບ ແລະ ປະສິດທິຜົນສູງຂຶ້ນກວ່າເກົ່າ.

**# ຂ່າວ-ພາບ: ຣັດສະໝີ ດວງສັດຈະ**

# ແລກປ່ຽນເງິນຕາຊະຊາຍ ຜິດລະບຽບກົດໝາຍບ້ານເມືອງ